GCI

# ບົດຮຽນທີ 8

# ພະວິນຍານບໍລິສຸດ ເພື່ອນສະໜິດຂອງພວກເຮົາ

## ຄໍາແນະນໍາ:

**ຈຸດປະສົງຂອງບົດຮຽນ:**

- ເພື່ອສຶກສາຂໍ້ພະຄໍາພີຕ່າງໆທີ່ເວົ້າກ່ຽວກັບລັກສະນະຂອງພະວິນຍານບໍລິສຸດ.
- ເພື່ອຄວາມເຂົ້າໃຈຫລາຍຂຶ້ນກ່ຽວກັບການງານຂອງພະວິນຍານບໍລິສຸດໃນຊີວິດຂອງຜູ້ທີ່ເຊື່ອ.

## ໂຄງຮ່າງບົດຮຽນ

### I. ຊົງເປັນຜູ້ຊ່ວຍຂອງທ່ານ

ກ. ເປັນມິດສະຫາຍ.
ຂ. ເປັນເພື່ອນທີ່ລົມນໍາໄດ້.
ຄ. ພະອົງຈະກ່າວຕໍ່ເຮົາແນວໃດ?

### II. ທ່ານກໍຮູ້ຈັກພະອົງ

ກ. ພະວິນຍານບໍລິສຸດຊົງເປັນບຸກຄົນຝ່າຍວິນຍານ – ແຕກຕ່າງ ແລະ ສະເພາະເຈາະຈົງ.
ຂ. ພະວິນຍານບໍລິສຸດຊົງເປັນອົງພະຜູ້ເປັນເຈົ້າ ແລະ ເປັນພະເຈົ້າ.

### III. "…ຊົງຢູ່ກັບທ່ານ…ຢູ່ໃນທ່ານ"

ກ. ແມ່ນໃຜຢູ່ໃນທ່ານ?
ຂ. ພາບສະແດງເຖິງການງານຂອງພະວິນຍານບໍລິສຸດ.

### IV. ຄູສອນຂອງທ່ານ

ກ. ຊົງສອນທ່ານ.

### V. ຜູ້ນໍາທາງຂອງທ່ານ

ກ. ຊົງຊີ້ນໍາ ແລະ ພາທ່ານໄປ.
ຂ ເພື່ອຈະເປັນຄູສອນ ແລະຊີ້ນໍາພວກເຮົາໄດ້ນັ້ນ ເຮົາຈະຕ້ອງໂອ້ລົມກັບພະອົງ.

### VI. ຊົງຖວາຍພະກຽດແດ່ພະເຢຊູ

ກ. ຊົງຖວາຍພະກຽດແກ່ພະເຢຊູ – ການເບິ່ງໄປທີ່ສະງ່າລາສີຂອງພະອົງ.
ຂ. ຊົງຖວາຍພະກຽດແດ່ພະເຢຊູ – ຊົງຮັບການເຈີມດ້ວຍພະວິນຍານ.
ຄ. ຊົງຖວາຍພະກຽດແດ່ພະເຢຊູ – ໂດຍທາງລິດເດດຂອງພະອົງ.

GCI

VII. ພະອົງຊົງນໍາມາຊຶ່ງການຕັກເຕືອນເລື່ອງການບາບ.

VIII. ພະອົງນໍາມາຊຶ່ງການປ່ຽນແປງໃໝ່ ແລະ ການບັງເກີດໃໝ່.

IX. ພະອົງຊົງປົດປ່ອຍເຮົາໃຫ້ພົ້ນຈາກລິດເດດຂອງຄວາມບາບ ແລະ ຄວາມຕາຍ.

X. ພະອົງຊົງຮັບປະກັນເຮົາໃນເລື່ອງຂອງຄວາມພົ້ນ (ການຊົງໂຜດໃຫ້ພົ້ນ).

XI. ພະອົງຈະຊົງປະທານຊີວິດໃຫ້ແກ່ຮ່າງກາຍທີ່ຕ້ອງຕາຍນີ້.

XII. ພະວິນຍານບໍລິສຸດມອບລິດເດດ (ພະລັງ) ໃຫ້ແກ່ຄໍາອະທິຖານຂອງພວກເຮົາ.

XIII. ພະວິນຍານບໍລິສຸດຊົງບັນດົນໃຈໃນການສັນລະເສີນ ແລະ ການນະມັດສະການ.

XIV. ພະວິນຍານບໍລິສຸດຊົງມອບລິດເດດໃນງານຮັບໃຊ້.

ກ. ຊົງເຈີມຜູ້ຮັບໃຊ້.
ຂ. ການຮັບລິດເດດຈາກພະວິນຍານໃນສະໄໝພະຄໍາພີເດີມ.
ຄ. ການຮັບລິດເດດຈາກພະວິນຍານໃນການປະກາດພະຄໍາ.
ງ. ຄໍາເວົ້າຂອງໂຢຮັນບັບຕິສະໂຕຕໍ່ພະເຢຊູ.
ຈ. ປະສົບການຂອງພະເຢຊູກັບພະວິນຍານບໍລິສຸດ.
ສ. ຄໍາສອນຂອງພະເຢຊູເລື່ອງພະວິນຍານບໍລິສຸດ.
ຊ. ສະພາບຂອງເຫລົ່າສາວົກຫລັງຈາກສາມປີ.
ຍ. ເຫດການຕ່າງໆໃນມື້ຄືນພະຊົນ.
ດ. ພາຍຫລັງຈາກການຖືກຄຶງ.
ຕ. ພະວິນຍານບໍລິສຸດມອບລິດເດດຫລັງຈາກການຕອກຄຶງທີ່ໄມ້ກາງແຂນແລ້ວ.
ຖ. ຜົນຕ່າງໆ.
ທ. ກິດຈະການງານອື່ນໆຂອງພະວິນຍານບໍລິສຸດ.
ນ. ການຮັບເອົາພະວິນຍານບໍລິສຸດ.

GCI

# I. ຊົງເປັນ "ຜູ້ຊ່ວຍ" ຂອງທ່ານ

**(ພາສາກຣີກ:. *Paracletos* ພາຣາເກຣທອສ໌) ເອີ້ນວ່າ ຄຽງຂ້າງເພື່ອຊ່ວຍເຫລືອ.**

*ຝ່າຍເຮົາຈະທູນຂໍພະບິດາ ແລະ ພະອົງຈະຊົງປະທານຜູ້ຊ່ວຍອີກຜູ້ໜຶ່ງໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານຕະຫລອດໄປເປັນນິດ, ຄື ພະວິນຍານແຫ່ງຄວາມຈິງ ຊຶ່ງ ໂລກບໍ່ອາດຈະຮັບໄດ້ເພາະໂລກບໍ່ເຫັນ ແລະບໍ່ຮູ້ຈັກພະອົງ ແຕ່ທ່ານທັງຫລາຍຮູ້ຈັກພະອົງ ເພາະພະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ.*

*ໂຢຮັນ 14:16-17*

## *ກ. ຊົງເປັນມິດສະຫາຍ*

ສຸພາສິດ 18:24; 17:17 ໂຢຮັນ 15:15

*ໂຢຮັນ 15:15*

*15 ຕໍ່ໄປເຮົາບໍ່ເອີ້ນທ່ານທັງຫລາຍວ່າຂ້ອຍໃຊ້ ເພາະຂ້ອຍໃຊ້ບໍ່ຮູ້ວ່ານາຍຂອງຕົນກຳລັງເຮັດອັນໃດ ແຕ່ເຮົາເອີ້ນພວກທ່ານວ່າມິດສະຫາຍ ເພາະວ່າທຸກສິ່ງທີ່ເຮົາໄດ້ຍິນຈາກພະບິດາຂອງເຮົາ ເຮົາກໍໄດ້ສະແດງໃຫ້ແກ່ພວກທ່ານຊາບແລ້ວ.*

## *ຂ. ຊົງເປັນເພື່ອນທີ່ທ່ານສາມາດລົມນຳໄດ້*

2ໂກຣິນໂທ 13:14

*14 ຂໍໃຫ້ພະຄຸນຂອງພະເຢຊູຄຣິດເຈົ້າ, ຄວາມຮັກຂອງພະເຈົ້າ, ແລະ ຄວາມຮ່ວມໃຈແຫ່ງພະວິນຍານບໍລິສຸດ ຈົ່ງສະຖິດຢູ່ນຳເຈົ້າທັງຫລາຍເທີນ.*

## *ຄ. ພະອົງຊົງກ່າວຕໍ່ເຮົາແນວໃດ?*

1. **ດ້ວຍຄວາມຮູ້**ໃນໃຈຂອງທ່ານເອງ ໂຣມ 8:16
2. ໂດຍທາງ**ພະຄຳພີ.** ເຮັບເຣີ 10:15-17
3. **ຄຳທຳນວາຍ - ນິມິດ - ຄວາມຝັນ** ກິດຈະການ 2:16-17; ຮາບັກກຸກ 2:13

GCI

4. **ການຊົງເປີດເຜີຍ** 1ໂກຣິນໂທ 2:9–12; ໂຢຮັນ 16:13–14

*1ກຣທ 2:9-11*
*9 ແຕ່ເໝືອນມີຄໍາຂຽນໄວ້ໃນພະຄໍາພີແລ້ວວ່າ,*
*"ສິ່ງທີ່ຕາບໍ່ໄດ້ເຫັນ, ຫູບໍ່ໄດ້ຍິນ,*
*ແລະສິ່ງທີ່ມະນຸດຄິດບໍ່ອອກ ຄື ສິ່ງນັ້ນທີ່ພະເຈົ້າໄດ້ຊົງຈັດແຈງໄວ້ສໍາລັບຄົນທີ່ຮັກພະອົງ."*
*10 ແຕ່ພະເຈົ້າໄດ້ຊົງສະແດງສິ່ງເຫລົ່ານັ້ນແກ່ເຮົາທັງຫຼາຍທາງພະວິນຍານ ເພາະວ່າ ພະວິນຍານຊົງຢັ່ງຮູ້ທຸກສິ່ງ ແມ່ນເປັນຄວາມເລິກລັບຂອງພະເຈົ້າ 11 ດ້ວຍວ່າໃຜໜໍ, ອາດຮູ້ຄວາມຄິດຂອງມະນຸດໄດ້ ເວັ້ນແຕ່ຈິດວິນຍານພາຍໃນມະນຸດຜູ້ນັ້ນເອງ. ດັ່ງນັ້ນແຫລະ, ພະໄທຂອງພະເຈົ້າບໍ່ມີຜູ້ ໃດຮູ້ໄດ້ ເວັ້ນແຕ່ພະວິນຍານຂອງພະເຈົ້າເທົ່ານັ້ນ. 12 ເຮົາທັງຫລາຍບໍ່ໄດ້ ຮັບວິນຍານຂອງໂລກ ແຕ່ໄດ້ຮັບພະວິນຍານ ຊຶ່ງມາຈາກພະເຈົ້າເພື່ອເຮົາທັງຫລາຍຈະໄດ້ຮູ້ເຖິງສິ່ງຕ່າງໆ ທີ່ພະເຈົ້າໄດ້ຊົງໂຜດປະທານແກ່ພວກເຮົານັ້ນ.*

# II. "...ທ່ານກໍຮູ້ຈັກພະອົງ"

*"ຄື ພະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະໂລກບໍ່ເຫັນແລະບໍ່ຮູ້ຈັກພະອົງ ແຕ່ທ່ານທັງຫລາຍຮູ້ຈັກພະອົງ ເພາະພະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ."*

*ໂຢຮັນ 14:17*

A.W. Tozer *"ໃນຄຣິສຕະຈັກຄຣິສຕຽນສ່ວນໃຫຍ່ມັກເບິ່ງຂ້າມພະວິນຍານບໍລິສຸດ, ບໍ່ວ່າພະອົງຈະຢູ່ ຫລືບໍ່ຢູ່ນໍາ ມັນກໍບໍ່ແຕກຕ່າງຫຍັງເລີຍ."*

ຄຣິດສະຕຽນເກືອບທັງໝົດໄດ້ຍິນເລື່ອງພະວິນຍານບໍລິສຸດ.

**ແຕ່ ທ່ານຮູ້ຈັກພະອົງແລ້ວບໍ?**

ຊົງເປັນພະເຈົ້າຜູ້ທີ່ເຮົາສາມາດຮູ້ຈັກ, ຮັກ ແລະ ນະມັດສະການໄດ້ດ້ວຍຄວາມສໍາພັນອັນໃກ້ຊິດ.

ຄໍາວ່າ "ຮູ້ຈັກ" ໃນທີ່ນີ້ໝາຍເຖິງຄວາມຮູ້ທີ່ໄດ້ຈາກປະສົບການແທ້ໆ ບໍ່ແມ່ນການຮູ້ຈັກຈາກສະຕິປັນຍາ (ການອ່ານຈາກປຶ້ມ, ການຮຽນເອົາ).

ການທີ່ພວກເຮົາຮູ້ຈັກກັນ ກໍບາງສ່ວນເທົ່ານັ້ນ ແຕ່ມີໃຜບໍທີ່ຈະຮູ້ຈັກກັນແບບສ່ວນຕົວ (ດີ)ແທ້ໆ.

## *ກ. ພະວິນຍານບໍລິສຸດຊົງເປັນບຸກຄົນຝ່າຍວິນຍານ – ແຕກຕ່າງ ແລະ ສະເພາະເຈາະຈົງ*

1. ຊົງມີ**ຄວາມຄິດ** ແລະ **ພະໄທ**ສ່ວນພະອົງເອງ ໂຣມ 8:27; 1ໂກຣິນໂທ 12:11
2. **ຊົງໂສກເສົ້າ** (ຊົງທຸກທໍລະມານໃຈ) ເອຊາຢາ 63:8–14; ເອເຟໂຊ 4:29–32

GCI

3. **ຊົງເຢັນລົງ, ເຮັດໃຫ້ມອດ** (ຖືກດັບມອດ, ເຢັນລົງ, ຫັກຫ້າມ)    1ເທຊະໂລນິກ 5:19;

*1ທຊນ 5:19-20*
*19 ຢ່າຫັກຫ້າມພະວິນຍານ.*

4. **ຊົງຖືກຂັດຂວາງ** ກິດຈະການ 7:51

5. **ຊົງຖືກດູຖູກ** ເຮັບເຣີ 10:29

6. **ຊົງຖືກຕົວະ** ກິດຈະການ 5:3

7. **ຊົງຖືກໝິ່ນປະໝາດ** ມາຣະໂກ 3:28–29

*28 "ເຮົາບອກເຈົ້າທັງຫລາຍຕາມຄວາມຈິງວ່າ ຄວາມຜິດບາບທຸກຢ່າງກັບຄຳ ໝິ່ນປະໝາດທີ່ເຂົາກ່າວນັ້ນຈະຊົງໂຜດໃຫ້ອະໄພແກ່ມະນຸດໄດ້. 29ແຕ່ຖ້າຜູ້ໃດຈະກ່າວຄຳໝິ່ນປະໝາດຕໍ່ພະວິນຍານບໍລິສຸດຈະຊົງໂຜດໃຫ້ອະໄພແກ່ຜູ້ນັ້ນບໍ່ໄດ້ຈັກເທື່ອ ແຕ່ຜູ້ນັ້ນຈະມີໂທດຕະຫລອດໄປເປັນນິດ"*

8. ພະເຢຊູໄດ້ຮັບ**ການປົກປ້ອງກັນ** ດ້ວຍພະອົງ       ຢາໂກໂບ 4:4–5

## *ຂ. ພະວິນຍານບໍລິສຸດຊົງເປັນອົງພະຜູ້ເປັນເຈົ້າ ແລະ ເປັນພະເຈົ້າ*

2ໂກຣິນໂທ 3:17;    ໂຢຮັນ 4:24; ກິດຈະການ 5:34

*2ໂກຣິນໂທ 3:17*
*17 ຖ້າຜູ້ໃດທຳລາຍວິຫານຂອງພະເຈົ້າ ພະເຈົ້າຈະຊົງທຳລາຍຜູ້ນັ້ນ ເພາະວິຫານ ຂອງພະເຈົ້າເປັນທີ່ສັກສິດ ເຈົ້າທັງຫລາຍແຫລະ, ເປັນວິຫານນັ້ນ.*

*ໂຢຮັນ 4:24*
*24 "ພະເຈົ້າຊົງເປັນພະວິນຍານ ແລະ ຜູ້ທີ່ນະມັດສະການພະອົງ ຕ້ອງນະມັດສະ ການດ້ວຍຈິດວິນຍານແລະຄວາມຈິງ"*

1. **ຊົງສະຖິດຢູ່ທຸກຫົນແຫ່ງ** ເພງສັນລະເສີນ 139:710 (ພະວິນຍານບໍ່ແມ່ນ)

2. **ຊົງມີອຳນາດທຸກຢ່າງ** ໂຢຮັນ 6:63   2ກຣທ 3:6   ໂຢບ 33:4

*ໂຢຮັນ 6:63*
*63 ພະວິນຍານຊົງເຮັດໃຫ້ມີຊີວິດ ສ່ວນເນື້ອກາຍບໍ່ມີປະໂຫຍດອັນໃດ ຖ້ອຍຄຳທີ່ເຮົາໄດ້ກ່າວຕໍ່ທ່ານທັງຫລາຍນັ້ນເປັນວິນຍານ ແລະ ເປັນຊີວິດ.*

3. **ຊົງຮອບຮູ້ທຸກຢ່າງ** 1ໂກຣິນໂທ 2:9–12

4. **ຊົງເປັນຢູ່ຕະຫລອດໄປເປັນນິດ** ເຮັບເຣີ 9:14

GCI

ພວກທ່ານເປັນ**ວິຫານ**ຂອງພະເຈົ້າ / ພະວິນຍານບໍລິສຸດ 1ໂກຣິນໂທ 3:16–17

ທ່ານຮັບຮູ້ພະອົງຢ່າງນັ້ນບໍ? ຍອມຮັບບໍ?

ພະອົງເປັນທີ່ນະມັດສະການຢູ່ບໍ?

# III. "...ຊົງຢູ່ກັບທ່ານ... ຢູ່ໃນທ່ານ"

*"ຄືພະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະໂລກບໍ່ເຫັນ ແລະບໍ່ຮູ້ຈັກພະອົງ ແຕ່ທ່ານທັງຫລາຍຮູ້ຈັກພະອົງ ເພາະພະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ." ໂຢຮັນ 14:17*

*ໃນວັນສຸດທ້າຍຂອງງານເທດສະການ ຊຶ່ງເປັນວັນໃຫຍ່ນັ້ນ ພະເຢຊູຊົງຢືນ ແລະຮ້ອງຂຶ້ນວ່າ, "ຖ້າຜູ້ໃດຫິວ ຜູ້ນັ້ນຈົ່ງມາຫາເຮົາແລະດື່ມ. ຜູ້ທີ່ວາງໃຈໃນເຮົາ ແມ່ນໍ້າອັນມີຊີວິດຈະໄຫລອອກຈາກພາຍໃນຜູ້ນັ້ນ ຕາມທີ່ພະຄໍາພີກ່າວໄວ້ແລ້ວ." ໂຢຮັນ 7:37*

*"ອັນໜຶ່ງ, ຖ້າແມ່ນພະວິນຍານຂອງພະເຈົ້າຊົງສະຖິດຢູ່ໃນເຈົ້າທັງຫລາຍຢ່າງແທ້ຈິງແລ້ວ ພວກເຈົ້າກໍບໍ່ຢູ່ຝ່າຍມະນຸດ ແຕ່ຢູ່ຝ່າຍພະວິນຍານ ແຕ່ຖ້າຜູ້ໃດບໍ່ມີພະວິນຍານຂອງພະຄຣິດ ຜູ້ນັ້ນກໍບໍ່ເປັນຂອງພະອົງ." ໂຣມ 8:9*

## *ກ. ແມ່ນໃຜຢູ່ໃນທ່ານ?*

1. ພະວິນຍານແຫ່ງ**ພະບິດາ** ມັດທາຍ 10:20
2. ພະວິນຍານຂອງ**ພະເຢຊູ** ກິດຈະການ 16:7
3. ພະວິນຍານຂອງ**ພະເຈົ້າ** ໂຣມ 8:9
4. ພະວິນຍານຂອງ**ພະຄຣິດ** ໂຣມ 8:9; 1ເປໂຕ 1:11
5. ພະວິນຍານແຫ່ງ**ພະບຸດ**ຂອງພະອົງ ຄາລາເຕຍ 4:6
6. ພະວິນຍານຂອງ**ພະເຢຊູຄຣິດ** ຟີລິບປອຍ 1:19
7. ພະວິນຍານແຫ່ງ**ຄວາມບໍລິສຸດ** ໂຣມ 1:4
8. ພະວິນຍານຜູ້ຊົງ**ພະຄຸນ** ເຮັບເຣີ 10:29
9. ພະວິນຍານຜູ້ຊົງ**ສະງ່າລາສີ** 1ເປໂຕ 4:14

GCI

10. ພະວິນຍານແຫ່ງ**ຄວາມຈິງ** ໂຢຮັນ 16:13; ເອຊາຢາ 11:23

11. ພະວິນຍານຜູ້ຊົງ**ໃຫ້ເປັນບຸດ** ໂຣມ 8:15

12. ພະວິນຍານອັນເຮັດໃຫ້**ມີຊີວິດ** ໂຣມ 8:2

13. ພະວິນຍານແຫ່ງ**ຄວາມເຊື່ອ** 2ໂກຣິນໂທ 4:13

## *ຂ. ພາບສະແດງເຖິງການງານຂອງພະວິນຍານບໍລິສຸດ*

ເປັນການຍາກຫລາຍຫາກພວກເຮົາຈະຖ່າຍທອດຄວາມຈິງໂດຍໃຊ້ແຕ່ຄຳເວົ້າເທົ່ານັ້ນ. ຍັງມີສັນຍາລັກ ຫລື ຮູບຕ່າງໆທີ່ຈະຊ່ວຍເປີດຄວາມເຂົ້າໃຈອັນຍິ່ງໃຫຍ່ນີ້ໄດ້.

1. **ໄຟ** ກ່າວເຖິງການທຳລາຍຂອງພະອົງ, ລິດເດດແຫ່ງ**ການຊຳລະລ້າງ**ໃນຊີວິດຂອງຜູ້ທີ່ເຊື່ອ.

   ລູກາ 3:16 ກິດຈະການ 2:3 ເອຊາຢາ 6:17

*ລູກາ 3:16*
*16 ໂຢຮັນຈຶ່ງຕອບເຂົາວ່າ, "ຝ່າຍເຮົາ, ເຮົາໃຫ້ເຈົ້າທັງຫລາຍຮັບບັບຕິສະມາ ດ້ວຍນໍ້າ ແຕ່ມີທ່ານຜູ້ໜຶ່ງຈະມາເປັນຜູ້ມີລິດກວ່າເຮົາອີກ ຊຶ່ງເຮົາບໍ່ສົມຄວນຈະ ແກ້ສາຍຮັດເກີບຂອງເພິ່ນ ຝ່າຍເພິ່ນຈະໃຫ້ພວກເຈົ້າຮັບບັບຕິສະມາດ້ວຍພະ ວິນຍານບໍລິສຸດແລະດ້ວຍໄຟ. 17 ມືຂອງທ່ານຖືດົ້ງຟັດເຂົ້າ ເພື່ອຈະເຮັດລານ ເຂົ້າຂອງຕົນໃຫ້ກ້ຽງດີ ແລະ ເພື່ອຮອບຮອມເຂົ້າເມັດດີໃສ່ໄວ້ໃນເລົ້າຂອງຕົນ ແຕ່ເຂົ້າລີບນັ້ນ ເພິ່ນຈະເຜົາເສຍດ້ວຍໄຟທີ່ບໍ່ຮູ້ມອດ."*

2. **ລົມ** ກ່າວເຖິງ**ລິດເດດຂອງພະອົງທີ່ບໍ່ສາມາດ**ເບິ່ງເຫັນໄດ້ ຊຶ່ງເປັນລິດເດດທີ່ພາທ່ານໄປຍັງບ່ອນທີ່ພະອົງຕ້ອງການ.

   ໂຢຮັນ 3:8

*8 "ລົມຢາກພັດໄປທິດໃດກໍພັດໄປທິດນັ້ນ ແລະ ທ່ານໄດ້ຍິນສຽງມັນ ແຕ່ທ່ານບໍ່ ຮູ້ວ່າມັນມາແຕ່ໃສຫລືໄປໃສ ທຸກຄົນທີ່ບັງເກີດຈາກພະວິນຍານກໍເປັນດັ່ງນັ້ນ ແຫລະ."*

3. **ນໍ້າ** ກ່າວເຖິງລິດເດດແຫ່ງການຊົງ**ຊຳລະລ້າງ / ຊຳລະໃຫ້ສະອາດ** ຊຶ່ງເຮັດໃຫ້ຜູ້ທີ່ເຊື່ອເຕັມລົ້ນໃນຊີວິດຝ່າຍຈິດວິນຍານ.

   1ໂກຣິນໂທ 6:11; ຕີໂຕ 3:5; ໂຢຮັນ 7:37-39

*ຕີໂຕ 3:5*
*5 ພະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ບໍ່ແມ່ນຍ້ອນກິດຈະການອັນຊອບ ທຳທີ່ພວກເຮົາເອງໄດ້ເຮັດ ແຕ່ພະອົງໄດ້ຊົງພະກະລຸນາຊຳລະໃຫ້ພວກເຮົາ ມີໃຈບັງເກີດໃໝ່ ແລະ ຊົງສ້າງພວກເຮົາຂຶ້ນໃໝ່ໂດຍພະວິນຍານບໍລິສຸດ,*

GCI

4. **ຕາປະທັບ** ກ່າວເຖິງ**ຄວາມເປັນເຈົ້າ**ຂອງພະອົງຕໍ່ຜູ້ທີ່ເຊື່ອ. ເປັນທີ່ສິ້ນສຸດ ເປັນຂອງພະອົງຕະຫລອດໄປເປັນນິດ.

   ເອເຟໂຊ 1:13

   *13 ໃນພະອົງນັ້ນທ່ານທັງຫລາຍກໍເໝືອນກັນ ເມື່ອໄດ້ຍິນພະທໍາອັນສັດຈິງ ຄືຂ່າວປະເສີດເລື່ອງຄວາມພົ້ນຂອງພວກທ່ານ ແລະ ໄດ້ວາງໃຈໃນພະອົງ ກໍ ໄດ້ຖືກຊົງປະທັບຕາໝາຍໄວ້ດ້ວຍພະວິນຍານບໍລິສຸດທີ່ຊົງສັນຍາໄວ້ນັ້ນ,*

5. **ນໍ້າມັນ** ກ່າວເຖິງລິດເດດຂອງພະອົງທີ່ຊົງ**ເຈີມ**ງານຮັບໃຊ້ ຫລື ການຮັກສາໂລກ.

   ກິດຈະການ 10:38; ມາລະໂກ 6:13

   *38 ຄືເລື່ອງທີ່ພະເຈົ້າໄດ້ຊົງຫົດສົງເຢຊູໄທນາຊາເລັດດ້ວຍພະວິນຍານບໍລິ ສຸດ ແລະດ້ວຍລິດທານຸພາບ ພະອົງຈຶ່ງສະເດັດໄປທຸກຫົນທຸກແຫ່ງເຮັດຄຸນ ງາມຄວາມດີ ແລະ ຊົງໂຜດບັນດາຜູ້ຖືກມານບຽດບຽນໃຫ້ດີ ເພາະວ່າ ພະເຈົ້າ ຊົງສະຖິດຢູ່ກັບພະອົງ.*

6. **ນົກເຂົາ** ກ່າວເຖິງ**ຄວາມອ່ອນສຸພາບ**ຂອງພະອົງ, **ຄວາມອ່ອນຫວານ**, ແລະ **ການເຕັມໄປດ້ວຍສັນຕິສຸກ**.

   ລູກາ 3:22

   *22 ແລະພະວິນຍານບໍລິສຸດຊົງຮູບເໝືອນນົກເຂົາໄດ້ສະເດັດລົງມາສະຖິດຢູ່ ເທິງພະອົງ ແລະ ມີພະສຸລະສຽງອອກມາຈາກຟ້າສະຫວັນວ່າ, "ທ່ານເອີຍ, ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫລາຍໃນທ່ານ."*

# IV. ຊົງເປັນຄູສອນຂອງທ່ານ

*"ແຕ່ພະຜູ້ຊ່ອຍຄືພະວິນຍານບໍລິສຸດ ທີ່ພະບິດາຈະຊົງໃຊ້ມາໃນນາມຂອງເຮົາ ອົງ ນັ້ນແຫລະ, ຈະຊົງສອນທ່ານທັງຫລາຍທຸກໆສິ່ງ ແລະ ຈະເຕືອນພວກທ່ານໃຫ້ລະນຶກ ເຖິງທຸກສິ່ງທີ່ເຮົານີ້ໄດ້ກ່າວແກ່ພວກທ່ານແລ້ວນັ້ນ."*
*ໂຢຮັນ 14:26*

## *ກ. ຊົງສອນທ່ານ*

1. **ພະຄໍາພີ** 2ເປໂຕ 1:21
2. **ການອະທິຖານ** ໂຣມ 8:26–27; ເອເຟໂຊ 6:18
3. ສິ່ງທີ່**ພະເຈົ້າຊົງປະທານມາ** 1ໂກຣິນໂທ 2:9–16

GCI

4. ສິ່ງທີ່**ກຳລັງຈະເກີດຂຶ້ນ** 1ຂ່າວຄາວ 12:32

*32 ອິດຊາຄາ: ຫົວໜ້າ 200 ຄົນ ພ້ອມທັງທະຫານທີ່ຢູ່ໃຕ້ການບັນຊາຂອງ ພວກເຂົາ (ບັນດາຜູ້ນຳເຫລົ່ານີ້ຮູ້ວ່າ ຊາວອິດສະລາເອນຄວນຈະເຮັດຫຍັງ ແລະ ເຮັດເວລາໃດດີທີ່ສຸດ).*

5. ການ**ຮັບໃຊ້ພັນທະກິດ** 1ໂກຣິນໂທ 2:45

*4 ຄຳເວົ້າ ແລະ ຄຳເທດສະໜາຂອງເຮົາບໍ່ແມ່ນຄຳທີ່ສະຫລາດສະຫລຽວອັນ ກ່ອມໃຈ ແຕ່ເປັນຄຳຊຶ່ງສະແດງພະວິນຍານແລະ ລິດອຳນາດ, 5 ເພື່ອຄວາມ ເຊື່ອຂອງເຈົ້າທັງ ຫລາຍຈະບໍ່ໄດ້ອາໄສສະຕິປັນຍາຂອງມະນຸດ ແຕ່ອາໄສລິດ ອຳນາດຂອງພະ ເຈົ້າ.*

6. ສິ່ງທີ່**ຈະກ່າວ** ກິດຈະການ 6:10; ມັດທາຍ 10:20

*20 ເພາະບໍ່ແມ່ນພວກທ່ານເອງຈະເປັນຜູ້ກ່າວ ແຕ່ແມ່ນພະວິນຍານແຫ່ງພະ ບິດາຂອງພວກທ່ານຊົງເປັນຜູ້ກ່າວໃນທ່ານ.*

# V. ຜູ້ນຳທາງຂອງທ່ານ

*"ແຕ່ເມື່ອພະອົງນັ້ນຄື ພະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພະອົງຈະນຳ ທ່ານທັງຫລາຍໄປສູ່ຄວາມຈິງທັງໝົດ ເພາະພະອົງຈະບໍ່ກ່າວແຕ່ລຳພັງຂອງພະອົງ ເອງ ແຕ່ພະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ ແລະ ຈະຊົງປະກາດໃຫ້ທ່ານທັງ ຫລາຍຮູ້ເຖິງສິ່ງເຫລົ່ານີ້ທີ່ຈະເກີດຂຶ້ນ." ໂຢຮັນ 16:13*

*"ພະອົງຈະນຳພາທ່ານ." ໂຣມ 8:14*

## *ກ. ຊົງຊີ້ນຳ ແລະ ພາທ່ານໄປ*

1. **ບ່ອນ**ທີ່ພະອົງຢາກໃຫ້ທ່ານໄປເຮັດພັນທະກິດ. ກິດຈະການ 8:29; ກິດຈະການ 10:19

2. ໃນ**ຄວາມຊອບທຳ** ໂຢຮັນ 16:8

## *ຂ. ເພື່ອຈະເປັນຄູສອນແລະຊີ້ນຳພວກເຮົາໄດ້ນັ້ນ ເຮົາຕ້ອງລົມນຳພະອົງດ້ອຍ*

*"ດ້ວຍວ່າການໃສ່ໃຈຢູ່ກັບຝ່າຍມະນຸດນັ້ນກໍຄືຄວາມຕາຍ ແລະ ການໃສ່ໃຈກັບຝ່າຍ ພະວິນຍານນັ້ນກໍຄືຊີວິດແລະສັນຕິສຸກ." ໂຣມ 8:6*

ປັກ**ຄວາມຄິດຈິດໃຈ**ຂອງພວກເຮົາໃສ່ພະອົງ.

1. ພະເຢຊູຊົງກ່າວໃນສິ່ງທີ່**ພະວິນຍານ**ຊົງເປີດເຜີຍ ກິດຈະການ 1:2

GCI

2. ພະອົງຊົງກ່າວຕໍ່**ຟີລິບ** ກິດຈະການ 8:29

3. ພະອົງຊົງກ່າວຕໍ່**ເປໂຕ** ກິດຈະການ 10:19

4. ພະອົງຊົງກ່າວຕໍ່**ພວກເຂົາ** ກິດຈະການ 13:2

5. ພະອົງຊົງກ່າວຕໍ່ພວກເຂົາໂດຍຜ່ານທາງ**ພວກຜູ້ທຳນວາຍ** ກິດຈະການ 28:25

6. "**ຈົ່ງຟັງ**ສິ່ງທີ່ພະວິນຍານຊົງກ່າວ" ພະນິມິດ 2:7, 11, 17, 29

# VI. ຊົງຖວາຍກຽດແກ່ພະເຢຊູ

*"ແຕ່ເມື່ອອົງພະຜູ້ຊ່ວຍຜູ້ທີ່ເຮົາມື້ຈະໃຊ້ມາຈາກພະບິດາຫາທ່ານທັງຫລາຍ ຄືພະ ວິນຍານແຫ່ງຄວາມຈິງຊຶ່ງອອກ ຈາກພະບິດາ ໄດ້ສະເດັດມາແລ້ວ ພະອົງນັ້ນແຫລະ, ຈະຊົງເປັນພະຍານແກ່ເຮົາ."* *ໂຢຮັນ 15:26;*

*"ພະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະວ່າພະອົງຈະຊົງເອົາສິ່ງທີ່ເປັນຂອງເຮົາມາ ປະກາດແກ່ທ່ານທັງຫລາຍ."* *ໂຢຮັນ 16:14*

## *ກ. ຊົງຖວາຍກຽດແກ່ພະເຢຊູ - ການເບິ່ງໄປທີ່ສະງ່າລາສີຂອງພະອົງ*

ການທີ່ຈະມີຄວາມສຳພັນອັນໃກ້ຊິດກັບພະເຢຊູນັ້ນ ມັນຍິ່ງຮຽກຮ້ອງໃຫ້ເຮົາມີຄວາມ ສຳພັນກັບພະວິນຍານບໍລິສຸດໃຫ້ຫລາຍຂຶ້ນດ້ວຍ. ເພາະພະອົງຈະຊົງເປີດເຜີຍ ເລື່ອງພະເຢຊູ.

1. ສະງ່າລາສີຂອງອົງພະຜູ້ເປັນເຈົ້າ 2ໂກຣິນໂທ 3:78; 17-18

2. ຈົ່ງເບິ່ງສະງ່າລາສີຂອງພະເຈົ້າ ໂຢຮັນ 17:24

   "ຢູ່ກັບຂ້ານ້ອຍ . . . . ເພື່ອເຂົາຈະໄດ້ເຫັນ**ສະງ່າລາສີ**ຂອງຂ້ານ້ອຍ"

3. ເຫດສັນນັ້ນ, ພວກເຮົາຈະຕ້ອງມີ**ການສາມັກຄີທຳ**ກັບພະວິນຍານບໍລິສຸດ. 2ໂກຣິນໂທ 13:14

GCI

4. ຫາກພວກເຮົາເບິ່ງສິ່ງທີ່ພະວິນຍານບໍລິສຸດຊົງເປີດເຜີຍເລື່ອງສະງ່າລາສີຂອງອົງພະຜູ້ເປັນເຈົ້າ – ພະອົງຈະຊົງປ່ຽນແປງເຮົາ 2ໂກຣິນໂທ 3:18

ຍິ່ງມີ**ພະວິນຍານ**ຫລາຍເທົ່າໃດ → **ການຊົງເປີດເຜີຍ**ຫລາຍເທົ່ານັ້ນ →
ຍິ່ງ**ສະງ່າລາສີ**ຫລາຍເທົ່າໃດ → **ການປ່ຽນແປງ**ຫລາຍເທົ່ານັ້ນ

*18 ແຕ່ເຮົາທັງຫລາຍບໍ່ມີຜ້າປົກໜ້າແລ້ວ ຕໍ່ພວກເຮົາຈຶ່ງສະທ້ອນແສງແຫ່ງ ພະສະງ່າລາສີຂອງອົງພະຜູ້ເປັນເຈົ້າ ແລະ ພະສະງ່າລາສີທີ່ມາຈາກອົງ ພະຜູ້ເປັນເຈົ້າຊຶ່ງເປັນພະວິນຍານນັ້ນ ກໍຊົງເຮັດໃຫ້ເຮົາທັງຫລາຍປ່ຽນມີລັກ ສະນະເໝືອນພະອົງ ໂດຍມີສະງ່າລາສີເປັນລຳດັບຂຶ້ນໄປ.*

## *ຂ. ຊົງຖວາຍກຽດແກ່ພະເຢຊູ – ຊົງຮັບການເຈີມດ້ວຍພະວິນຍານ.*

1. "ຮັບການເຈີມ" ບໍ່ເໝືອນກັບເຕີມນໍ້າໃສ່ພາຊະນະໃດໜຶ່ງ ແຕ່ເໝືອນກັບ ລົມທີ່ ພັດ ເຮືອໃບໄປ
ເອເຟໂຊ 5:18;
ໂຢຮັນ 3:8

*ເອເຟໂຊ 5:18*
*18 ແລະຢ່າເມົາເຫລົ້າແວງ ຊຶ່ງພາໃຫ້ເສຍຄົນ ແຕ່ຈົ່ງເຕັມໄປດ້ວຍພະວິນຍານ ກໍດີກວ່າ.*

2. ເອເຟໂຊ 5:19 ປ່ຽນແປງ:

**ຄວາມຄິດ / ຄຳເວົ້າ**
**ຫົວໃຈ / ບົດເພງ**
**ທ່າທີ / ການໂມທະນາພະຄຸນ** ຂໍ້ 20
**ທຳມະຊາດ / ຂ້ອຍໃຊ້:** ຂໍ້ 22; ຂໍ້ 25

*ເອເຟໂຊ 5:19,20,22,25*
*19 ຈົ່ງສົນທະນາກັນດ້ວຍເພງສັນລະເສີນ, ເພງນະມັດສະການ ແລະ ເພງຍ້ອງ ຍໍສໍລະເສີນຝ່າຍພະວິນຍານ ຄືຮ້ອງເພງແລະສັນລະເສີນຈາກໃຈຂອງທ່ານທັງ ຫລາຍຖວາຍແດ່ອົງພະຜູ້ເປັນເຈົ້າ, 20 ຈົ່ງຂອບພະຄຸນພະເຈົ້າ ຄື ພະບິດາສຳຫລັບສິ່ງສາລະພັດສະເໝີ ໃນພະນາມຂອງພະເຢຊູຄຣິດເຈົ້າຂອງເຮົາ ທັງຫລາຍ,*
*22 ຝ່າຍພັນລະຍາ, ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນ ເໝືອນຍອມຟັງອົງພະຜູ້ເປັນເຈົ້າ.*
*25 ຝ່າຍສາມີ, ຈົ່ງຮັກພັນລະຍາຂອງຕົນ ເໝືອນດັ່ງພະຄຣິດໄດ້ຊົງຮັກຄຣິສ ຕະຈັກ ແລະ ຊົງສະຫລະພະອົງເອງ ເພື່ອຄຣິສຕະຈັກ,*

GCI

3. ເອເຟໂຊ 3:1619 "... ພະວິນຍານຂອງພະອົງ .. ໃນຄວາມຮັກ .. ໄດ້ຮັບ**ຄວາມເຕັມບໍລິບູນ**ຂອງພະເຈົ້າທຸກປະການ"

ຍິ່ງມີ**ພະວິນຍານ**ຫລາຍ → ກໍຍິ່ງມີ**ພະຄຣິດ** →
ຍິ່ງມີ**ຄວາມຮັກ**ຫລາຍ → ກໍຍິ່ງມີຄວາມເຕັມບໍລິບູນຂອງ**ພະເຈົ້າ** →
**ການປ່ຽນແປງ**ອື່ນໆອີກ.

*ເອເຟໂຊ 3:1619*
*16 ຂໍໃຫ້ພະອົງ ຊົງໂຜດປະທານກຳລັງອັນເຂັ້ມແຂງຝ່າຍຈິດໃຈແກ່ທ່ານທັງ ຫລາຍ ຕາມຄວາມອຸດົມສົມບູນແຫ່ງພະສະຫງ່າລາສີຂອງພະອົງ ໂດຍເດດ ພະວິນຍານຂອງພະອົງ, 17 ເພື່ອພະຄຣິດຈະຊົງຕັ້ງຢູ່ໃນໃຈຂອງທ່ານທັງ ຫລາຍທາງຄວາມເຊື່ອ ເພື່ອວ່າ, ເມື່ອພວກທ່ານໄດ້ວາງຮາກລົງໝັ້ນຄົງໃນຄວາມຮັກແລ້ວ, 18 ພວກທ່ານກໍຈະມີຄວາມສາມາດເຂົ້າໃຈ, ພ້ອມກັບໄພ່ພົນທັງປວງຂອງພະອົງ, ເຖິງຄວາມກວ້າງ, ຄວາມຍາວ, ຄວາມສູງ ແລະ ຄວາມ ເລິກ, 19 ທັງຈະຮູ້ຈັກຄວາມຮັກຂອງອົງພະຄຣິດຊຶ່ງເກີນຄວາມຮູ້ ເພື່ອທ່ານທັງຫລາຍຈະໄດ້ຮັບຄວາມເຕັມບໍລິບູນຂອງພະເຈົ້າທຸກປະການ.*

4. ເມື່ອໄດ້ຮັບການເຈີມດ້ວຍພະວິນຍານບໍລິສຸດແລ້ວ – ມີພະລັກສະນະຢ່າງພະອົງ. **ຜົນ**ຂອງພະວິນຍານກໍຈະເກີດຂຶ້ນ (ແບບເຫັນໄດ້ຢ່າງຊັດເຈນ) **ໃນຊີ ວິດຂອງ ພວກເຮົາ**.
*ຄາລາເຕຍ 5:22*

*ຄາລາເຕຍ 5:22*
*22 ຜົນຂອງພະວິນຍານນັ້ນຄື ຄວາມຮັກ, ຄວາມຍິນດີ, ສັນຕິສຸກ, ຄວາມອົດ ກັ້ນໄວ້ນານ, ຄວາມປານີ, ຄວາມດີ, ຄວາມສັດຊື່,*

ກ) **ຄວາມຮັກ** 2ໂກຣິນໂທ 5:14
ຄວາມຮັກເທົ່ານັ້ນທີ່ສາມາດເຮັດໃຫ້ນ້ຳພະໄທຂອງພະເຈົ້າທີ່ມີຕໍ່ຊີ ວິດຂອງເຮົາສຳເລັດໄດ້. ຜູ້ທີ່ເຊື່ອຈະຕ້ອງມີຄວາມຮັກເປັນແຮງບັນດານ ໃຈ, ມີເຈົ້ານາຍເປັນຄວາມຮັກ ແລະ ມີຄວາມຮັກເປັນແຮງຈູງໃຈ.

ຫາກບໍ່ເຊັ່ນນັ້ນແລ້ວ, ພວກເຮົາກໍເປັນພຽງສາສະໜາທີ່ສົ່ງສຽງກະທຶກນິກນອງເທົ່ານັ້ນ.
1ໂກຣິນໂທ 13:1; ໂຢຮັນ 15:12–13

ຂ) **ຄວາມຊົມຊື່ນຍິນດີ** ໂຢຮັນ 15:11; ໂຣມ 14:17

ຄວາມຊົມຊື່ນຍິນດີເປັນຜົນຈາກການຍຶດໝັ້ນໃນຄວາມຮັກຂອງພະອົງ. ພະລັງຂອງຄວາມຮັກ.

ຄ) **ສັນຕິສຸກ** ໂຢຮັນ 14:27; 16:33
ຟີລິບປອຍ; ໂກໂລຊາຍ 3:15

ເປັນຜົນຂອງການຈາກການຍຶດໝັ້ນໃນພະອົງ.

ງ) **ຄວາມອົດທົນດົນນານ** 1ໂກຣິນໂທ 13:4

ຄວາມຮັກຄືການອົດທົນ, ທົນຕໍ່ຄວາມທຸກທໍລະມານຕ່າງໆ.

GCI

| | | |
|---|---|---|
| ຈ) | **ຄວາມປານີ** | 1ໂກຣິນໂທ 13:4 |
| | ຄວາມຮັກຄືການປານີ. | ການກະທຳທີ່ສະແດງອອກເຖິງຄວາມຮັກ |
| ສ) | **ຄວາມດີ** | ໂຢຮັນ 10:11; ເພງສັນລະເສີນ 106:1<br>ໂຣມ 2:7, 10; 12:21<br>ຄາລາເຕຍ 6:10; 1ເປໂຕ 3:11 |
| | ລັກສະນະຂອງຄວາມຮັກ | "ເຮົາເປັນຜູ້ລ້ຽງທີ່ດີ" |
| ຊ) | **ຄວາມສັດຊື່** | ມັດທາຍ 25:21 ລູກາ 16:10<br>ພະນິມິດ 2:10 |
| | ຄວາມໝັ້ນໃຈໃນຄວາມຮັກ | ຄຳສັນຍາ |
| ຍ) | **ອ່ອນສຸພາບ / ອ່ອນຫວານ** | 2ໂກຣິນໂທ 10:1 |
| | ຄວາມຖ່ອມໃຈໃນຄວາມຮັກ. | |
| ດ) | **ການບັງຄັບຕົນ** | |
| | ໄຊຊະນະໃນຄວາມຮັກ | |

"ກົດໝາຍທີ່ຫ້າມການຢ່າງນີ້ກໍບໍ່ມີ." ຫາກມີພະວິນຍານບໍລິສຸດຄວບຄຸມຄົນເຮົາແລ້ວ ກໍບໍ່ຈຳເປັນຕ້ອງໃຊ້ກົດໝາຍມາບັງຄັບໃຫ້ເຂົາເຈົ້າດຳເນີນຊີວິດໃນຄວາມຊອບທຳ. ເຄັດລັບທີ່ຈະໃຫ້ພະວິນຍານຄວບຄຸມຊີ ວິດໄດ້ນັ້ນ ສາມາດພົບໄດ້ໃນ ພະທຳ ໂຣມ 12:1-2.

## *ຄ. ຊົງຖວາຍພະກຽດແດ່ພະເຢຊູ – ໂດຍຜ່ານທາງລິດເດດຂອງພະອົງ*

| | | |
|---|---|---|
| 1. | ເຮັດການໃຫຍ່ກວ່າ | ໂຢຮັນ 14:12, 16 |
| 2. | ການຊົງສະແດງຂອງພະວິນຍານ | 1ໂກຣິນໂທ 2:4-5 |
| 3. | ໂດຍພະວິນຍານຂອງເຮົາ | ເສກາລີຢາ 4:6 |

**"ຄວາມອາດສາມາດ"** ເປັນພອນສະຫວັນ ແລະ ຄວາມສາມາດພິເສດ ທີ່ມີຢູ່ພາຍໃນ.

**"ອຳນາດ"** ແມ່ນກຳລັງທີ່ເຮົາສາມາດຫາໄດ້ດ້ວຍເງິນ, ອິດທິ ພົນ.

GCI

4. **ຂອງປະທານຝ່າຍພະວິນຍານ:**

*1ໂກຣິນໂທ 12:7-11*

*7 ການສະແດງຂອງພະວິນຍານນັ້ນມີແກ່ທຸກຄົນເພື່ອປະໂຫຍດຮ່ວມກັນ 8 ພະເຈົ້າຊົງໂຜດປະທານໂດຍທາງພະວິນຍານ ໃຫ້ຜູ້ໜຶ່ງມີຖ້ອຍຄຳປະກອບດ້ວຍສະຕິປັນຍາ ແລະ ໃຫ້ອີກຜູ້ໜຶ່ງມີຖ້ອຍຄຳອັນປະກອບດ້ວຍວິຊາຄວາມຮູ້ ແຕ່ເປັນພະວິນຍານອົງດຽວກັນ, 9 ແລະໃຫ້ອີກຜູ້ໜຶ່ງມີຄວາມເຊື່ອ ແຕ່ເປັນ ພະວິນຍານອົງດຽວກັນ ແລະ ໃຫ້ອີກຜູ້ໜຶ່ງມີອຳນາດໃຫ້ຄົນດີພະຍາດ ແຕ່ເປັນພະວິນຍານອົງດຽວກັນ, 10 ແລະໃຫ້ອີກຜູ້ໜຶ່ງມີອຳນາດເຮັດການອິດທິ ລິດຕ່າງໆ ແລະ ໃຫ້ອີກຜູ້ໜຶ່ງປະກາດພະທຳ, ແລະ ໃຫ້ອີກຜູ້ໜຶ່ງຮູ້ຈັກສັງເກດວິນຍານຕ່າງໆ, ແລະໃຫ້ອີກຜູ້ໜຶ່ງປາກພາສາແປກໆ ແລະໃຫ້ອີກຜູ້ໜຶ່ງແປພາສາແປກໆ 11 ສິ່ງສາລະພັດເຫລົ່ານີ້ພະວິນຍານອົງດຽວກັນຊົງບັນດານ ແລະ ປະທານແກ່ທຸກຄົນຕາມຊອບພະໄທຂອງພະອົງ.*

| | | |
|---|---|---|
| ກ) | **ຖ້ອຍຄຳປະກອບດ້ວຍສະຕິປັນຍາ** | 1ໂກຣິນໂທ 2:6-14 |
| ຂ) | **ຖ້ອຍຄຳອັນປະກອບດ້ວຍວິຊາຄວາມຮູ້** | ກິດຈະການ 5:3; 10:11-20; ໂຢຮັນ 16:13 |
| ຄ) | **ຄວາມເຊື່ອ** | 2ໂກຣິນໂທ 4:13 |
| ງ) | **ມີອຳນາດໃຫ້ຄົນດີພະຍາດ** | ກິດຈະການ 2:43; 3:68; 5:12-16 |
| ຈ) | **ມີອຳນາດເຮັດການອິດທິລິດຕ່າງໆ** | ກິດຈະການ 19:11-12; 8:13 |
| ສ) | **ການປະກາດພະທຳ** | ກິດຈະການ 11:27-28; 21:10-11 |
| ຊ) | **ຮູ້ຈັກສັງເກດວິນຍານຕ່າງໆ** | ກິດຈະການ 16:16-18 |
| ຍ) | **ພາສາແປກໆປະເພດຕ່າງໆ**: | |

| | | |
|---|---|---|
| (i) | ພາສາແປກໆສຳລັບຄຳອ້ອນວອນ | ຢູດາ 20<br>1ໂກຣິນໂທ 14:2, 5,14, 18 |
| (ii) | ພາສາແປກໆທີ່ປາກຕໍ່ມະນຸດ | ກິດຈະການ 2:4-13<br>1ໂກຣິນໂທ 14:21-22 |
| (iii) | ການແປພາສາແປກໆ | 1ໂກຣິນໂທ 14:5, 13 |

GCI

## VII. ພະອົງຊົງນຳມາຊຶ່ງການຕັກເຕືອນເລື່ອງການບາບ

*"ເມື່ອພະອົງສະເດັດມາແລ້ວ ພະອົງນັ້ນແຫລະ, ຈະຊົງບັນດານໃຫ້ໂລກຮູ້ແຈ້ງໃນ ເລື່ອງຄວາມຜິດບາບ, ຄວາມຊອບທຳ ແລະ ການພິພາກສາ. ໃນເລື່ອງຄວາມຜິດບາບ ນັ້ນ ຄືເພາະເຂົາບໍ່ວາງໃຈເຊື່ອໃນເຮົາ. ໃນເລື່ອງຄວາມຊອບທຳນັ້ນ ຄື ເພາະເຮົາໄປຫາ ພະບິດາ ແລະທ່ານຈະບໍ່ເຫັນເຮົາອີກ. ສ່ວນເລື່ອງການພິພາກສານັ້ນ ຄື ເພາະຜູ້ປົກຄອງ ໂລກນີ້ໄດ້ຖືກພິພາກສາແລ້ວ."*

*ໂຢຮັນ 16:8-11*

## VIII. ພະອົງນຳມາຊຶ່ງການປ່ຽນແປງໃໝ່ ແລະການບັງເກີດໃໝ່

*"ພະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ບໍ່ແມ່ນຍ້ອນກິດຈະການອັນຊອບທຳທີ່ພວກ ເຮົາເອງໄດ້ເຮັດ ແຕ່ພະອົງໄດ້ຊົງພະກະລຸນາຊຳລະໃຫ້ພວກເຮົາມີໃຈບັງເກີດໃໝ່ ແລະ ຊົງສ້າງພວກເຮົາຂຶ້ນໃໝ່ໂດຍພະວິນຍານບໍລິສຸດ."*
*ຕີໂຕ 3:5*

*ພະເຢຊູຊົງຕອບວ່າ, "ເຮົາບອກທ່ານຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດມາຈາກ ນໍ້າແລະຈາກພະວິນຍານ ຜູ້ນັ້ນຈະເຂົ້າໃນລາດຊະແຜ່ນດິນຂອງພະເຈົ້າບໍ່ໄດ້." ໂຢຮັນ 3:5*

*"ລົມຢາກພັດໄປທິດໃດກໍພັດໄປທິດນັ້ນ ແລະ ທ່ານໄດ້ຍິນສຽງມັນ ແຕ່ທ່ານບໍ່ຮູ້ວ່າມັນ ມາແຕ່ໃສ ຫລືໄປໃສ ທຸກຄົນທີ່ບັງເກີດຈາກພະວິນຍານກໍເປັນດັ່ງນັ້ນແຫລະ." ໂຢຮັນ 3:8*

*"ພະວິນຍານຊົງເຮັດໃຫ້ມີຊີວິດ ສ່ວນເນື້ອກາຍບໍ່ມີປະໂຫຍດອັນໃດ ຖ້ອຍຄຳທີ່ເຮົາ ໄດ້ກ່າວຕໍ່ທ່ານທັງຫລາຍນັ້ນເປັນວິນຍານ ແລະເປັນຊີວິດ." ໂຢຮັນ 6:63*

*"ດ້ວຍວ່າທ່ານທັງຫລາຍໄດ້ເກີດໃໝ່ແລ້ວ ບໍ່ແມ່ນຈາກແນວປູກທີ່ອາດເປື່ອຍເນົ່າ ແຕ່ ເກີດແນວປູກທີ່ບໍ່ອາດເປື່ອຍເນົ່າ ຄືເກີດຈາກພະທຳຂອງພະເຈົ້າອັນຊົງຊີວິດ ແລະຕັ້ງໝັ້ນຄົງ." 1ເປໂຕ 1:23*

## IX. ພະອົງຊົງປົດປ່ອຍເຮົາໃຫ້ພົ້ນຈາກລິດເດດຂອງຄວາມບາບ ແລະ ຄວາມຕາຍ

*"ເພາະວ່າກົດຂອງພະວິນຍານອັນເຮັດໃຫ້ມີຊີວິດໃນພະເຢຊູຄຣິດນັ້ນ ໄດ້ເຮັດໃຫ້ ເຮົາພົ້ນຈາກກົດຂອງຄວາມຜິດບາບແລະຄວາມຕາຍ." ໂຣມ 8:2*

# X ພະອົງຊົງຮັບປະກັນເຮົາໃນເລື່ອງຄວາມພົ້ນ

*"ຝ່າຍພະວິນຍານນັ້ນຊົງຍ່ອມເປັນພະຍານກັບວິນຍານຂອງເຮົາທັງຫລາຍວ່າ ພວກ ເຮົາເປັນບຸດຂອງພະເຈົ້າ." ໂຣມ 8:16*

*"ນີ້ແຫລະ, ຄືຜູ້ທີ່ໄດ້ມາໂດຍນ້ຳແລະພະໂລຫິດ ຄືພະເຢຊູຄຣິດ ບໍ່ແມ່ນດ້ວຍນ້ຳສິ່ງ ດຽວ ແຕ່ດ້ວຍນ້ຳ ແລະພະໂລຫິດ ແລະ ພະວິນຍານຊົງເປັນພະຍານ ເພາະພະວິນຍານຊົງເປັນຄວາມຈິງ. 1ໂຢຮັນ 5:6*

# XI. ພະອົງຈະຊົງປະທານຊີວິດໃຫ້ແກ່ຮ່າງກາຍທີ່ຕ້ອງຕາຍນີ້

*"ຖ້າພະວິນຍານຂອງພະອົງ ຜູ້ຊົງບັນດານໃຫ້ພະເຢຊູຊົງຄືນພະຊົນນັ້ນ ຊົງສະ ຖິດຢູ່ໃນພວກເຈົ້າ ພະອົງຜູ້ຊົງບັນດານໃຫ້ພະເຢຊູຄຣິດຊົງຄືນພະຊົນແລ້ວນັ້ນກໍ ຈະຊົງບັນດານໃຫ້ກາຍທີ່ຕ້ອງຕາຍຂອງພວກເຈົ້າຄືນມີຊີວິດໃໝ່ ດ້ວຍລິດແຫ່ງພະວິນ ຍານຂອງພະອົງທີ່ຊົງສະຖິດຢູ່ໃນພວກເຈົ້າ." ໂຣມ 8:11*

ຄຳວ່າ "ຮ່າງກາຍທີ່ຕ້ອງຕາຍ" ໝາຍເຖິງ "ຈະຕ້ອງຕາຍ" ແລະ ກ່າວອ້າງອີງເຖິງຮ່າງ ກາຍຂອງພວກເຮົາ. ເມື່ອພະອົງຊົງສະຖິດຢູ່ໃນພວກເຮົາແລ້ວ, ກໍຈະຊົງປະທານຊີວິດ (ເພີ່ມໄລຍະຊີວິດຂອງເຮົາ), ກຳລັງ, ສຸຂະພາບທີ່ດີ ແລະ ຄວາມເຂັ້ມແຂງ.

# XII. ພະວິນຍານບໍລິສຸດມອບລິດເດດ (ພະລັງ)ໃຫ້ແກ່ຄຳອະທິຖານ ຂອງພວກເຮົາ

*"ແຕ່ຝ່າຍທ່ານທີ່ຮັກທັງຫລາຍເອີຍ, ຈົ່ງສ້າງຕົວເອງຂຶ້ນເທິງຄວາມເຊື່ອອັນສັກສິດທີ່ສຸດ ຂອງພວກທ່ານ ແລະຈົ່ງອ້ອນວອນໃນພະວິນຍານບໍລິສຸດ." ຢູດາ 20*

*"ຈົ່ງອ້ອນວອນແລະໄຫວ້ວອນທຸກຢ່າງ ຈົ່ງອ້ອນວອນໂດຍພະວິນຍານທຸກເວລາ ແລະ ຈົ່ງເຝົ້າລະວັງໃນການນັ້ນດ້ວຍຄວາມພຽນທຸກຢ່າງ ຈົ່ງອ້ອນວອນເພື່ອໄພ່ພົນທັງປວງ ຂອງພະເຈົ້າ." ເອເຟໂຊ 6:18*

*"ໃນທຳນອງດຽວກັນນັ້ນແຫລະ, ພະວິນຍານຊົງຊ່ອຍຊູເຮົາທັງຫລາຍເມື່ອພວກເຮົາ ອ່ອນກຳລັງລົງ ເພາະເຮົາທັງຫລາຍບໍ່ຮູ້ວ່າພວກເຮົາຄວນຈະອ້ອນວອນຂໍສິ່ງໃດ ແຕ່ອົງ ພະວິນຍານຊົງຊ່ອຍຂໍແທນພວກເຮົາ ດ້ວຍການຖອດຫຸ່ນຢ່າງຫາຄຳເວົ້າບໍ່ໄດ້. ແລ້ວ ພະອົງຜູ້ຊົງສອດສ່ອງຮູ້ໃຈມະນຸດ ກໍຊົງຊາບຄວາມນຶກຄິດຂອງພະວິນຍານ ເພາະວ່າ ພະວິນຍານຊົງອ້ອນວອນຂໍສຳລັບພວກໄພ່ພົນຂອງພະເຈົ້າຕາມນ້ຳພະໄທພະ ອົງ." ໂຣມ 8:26-27*

GCI

# XIII. ພະວິນຍານບໍລິສຸດຊົງບັນດົນໃຈໃນການສັນລະເສີນ ແລະ ການນະມັດສະການ

*"ຊາວເກາະກະເຣເຕແລະຊາວປະເທດອາຣະເບຍ ພວກເຮົາໄດ້ຍິນເຂົາກ່າວເຖິງມະຫາ ລາຊະກິດຂອງພະເຈົ້າໃນພາສາຂອງເຂົາເອງ."*
*ກິດຈະການ 2:11*

*"ເພາະວ່າເຂົາໄດ້ຍິນຄົນເຫລົ່ານັ້ນປາກພາສາແປກໆແລະ ຍົກຍໍສັນລະເສີນພະເຈົ້າ."*
*ກິດຈະການ 10:46*

*"ເພາະວ່າເຮົາທັງຫລາຍເປັນພວກທີ່ຖືພິທີຕັດແທ້, ເປັນຜູ້ນະມັດສະການພະເຈົ້າດ້ວຍ ຈິດວິນຍານ ແລະເອົາພະເຢຊູຄຣິດມາອວດ ແລະ ບໍ່ໄດ້ໄວ້ໃຈໃນຝ່າຍມະນຸດ."* *ຟີລິບປອຍ 3:3*

*"ພະເຈົ້າຊົງເປັນພະວິນຍານ ແລະ ຜູ້ທີ່ນະມັດສະການພະອົງ ຕ້ອງນະມັດສະການ ດ້ວຍຈິດວິນຍານແລະຄວາມຈິງ."*
*ໂຢຮັນ 4:24*

# XI. ພະວິນຍານບໍລິສຸດຊົງປະທານລິດເດດໃນງານຮັບໃຊ້

## *ກ. ການຊົງເຈີມຜູ້ຮັບໃຊ້*

1. ການຊົງເຈີມດ້ວຍນ້ຳມັນ — ອົບພະຍົບ 30:22–33
2. ການອຸທິດ — ລະບຽບພວກເລວີ 8:10-12, 30

## *ຂ. ການຮັບລິດເດດຈາກພະວິນຍານໃນສະໄໝພະຄຳພີເດີມ*

1. **ຜູ້ນຳເຈັດສິບຄົນ** — ຈົດເຊັນບັນຊີ 11:17, 25–29.
2. **ໂຢຊວຍ** — ພະບັນຍັດສອງ 34:9
3. **ໂອດນີເອນ** — ພວກຜູ້ປົກຄອງ 3:10
4. **ກີເດໂອນ** — ພວກຜູ້ປົກຄອງ 6:34
5. **ແຊມຊັນ** — ພວກຜູ້ປົກຄອງ 14:6, 15:14
6. **ຊາອູນ** — 1ຊາມູເອນ 10:6, 9, 10

GCI

7. **ດາວິດ** 1ຊາມູເອນ 16:13

8. **ຄົນຂອງຊາອູນ** 1ຊາມູເອນ 19:20-23

## *ຄ. ການຮັບລິດເດດຈາກພະວິນຍານບໍລິສຸດໃນການປະກາດພະຄໍາ*

1. **ໂຢຮັນ ບັບຕິສະໂຕ** ລູກາ 1:15, 17

2. **ມາຣີອາ** ລູກາ 1:35

3. **ເອລີຊາເບດ** ລູກາ 1:41-42

4. **ຊາຂາຣີຢາ** ລູກາ 1:67

## *ງ. ຄໍາເວົ້າຂອງໂຢຮັນບັບຕິສະໂຕເຖິງເລື່ອງພະເຢຊູ*

*ລູກາ 3:16*
*16 ໂຢຮັນຈຶ່ງຕອບເຂົາວ່າ, "ຝ່າຍເຮົາ, ເຮົາໃຫ້ເຈົ້າທັງຫລາຍຮັບບັບຕິສະມາດ້ວຍນໍ້າ ແຕ່ມີທ່ານຜູ້ໜຶ່ງຈະມາເປັນຜູ້ມີລິດກວ່າເຮົາອີກ ຊຶ່ງເຮົາບໍ່ສົມຄວນຈະແກ້ສາຍຮັດເກີບຂອງເພິ່ນ ຝ່າຍເພິ່ນຈະໃຫ້ພວກເຈົ້າຮັບບັບຕິສະມາດ້ວຍພະວິນຍານບໍລິສຸດ ແລະ ດ້ວຍໄຟ."*

## *ຈ. ປະສົບການຂອງພະເຢຊູກັບພະວິນຍານບໍລິສຸດ*

ລູກາ 3:2122; 4:1, 14, 18

## *ສ. ຄໍາສອນຂອງພະເຢຊູເລື່ອງພະວິນຍານບໍລິສຸດ*

ໂຢຮັນ 14:12-18

## *ຊ. ສະພາບຂອງເຫລົ່າສາວົກຫລັງຈາກສາມປີ*

ລູກາ 22:32

GCI

## *ຍ. ເຫດການຕ່າງໆໃນມື້ຄືນພະຊົນ*

ລູກາ 24:1, 13, 21, 33–51

*ລູກາ 24:49*
*49 "ແລະເບິ່ງແມ, ອັນທີ່ພະບິດາຂອງເຮົາໄດ້ຊົງສັນຍາໄວ້ນັ້ນ ເຮົາກໍໃຊ້ມາເທິງທ່ານ ທັງຫລາຍ ແຕ່ຝ່າຍພວກທ່ານຈົ່ງຄອຍຢູ່ໃນກຸງ ຈົນກວ່າພວກທ່ານຈະໄດ້ປະກອບດ້ວຍ ລິດເດດທີ່ມາຈາກເບື້ອງເທິງ."*

## *ດ. ພາຍຫລັງທີ່ຄືນພະຊົນ*

ລູກາ 24:45 ແລະ ໂຢຮັນ 20:22

*ລູກາ 24:45*
*45 ເມື່ອນັ້ນພະອົງໄດ້ຊົງບັນດົນຈິດໃຈຂອງເຂົາ ເພື່ອໃຫ້ເຂົາເຂົ້າໃຈພະຄຳພີ.*

*ໂຢຮັນ 20:22*
*22 ເມື່ອຊົງກ່າວຢ່າງນັ້ນແລ້ວ ພະອົງຊົງລະບາຍລົມອອກຈາກພະໂອດໃສ່ເຂົາ ໂດຍ ບອກວ່າ, "ທ່ານທັງຫລາຍຈົ່ງຮັບເອົາພະວິນຍານບໍລິສຸດ."*

## *ຕ. ພະວິນຍານບໍລິສຸດຊົງມອບລິດເດດຫລັງຈາກການຄືນພະຊົນແລ້ວ*

ລູກາ 24:49–51 ແລະ ກິດຈະການ 1:19; 2:14

*ກິດຈະການ 2:14*
*ເມື່ອຄົບຮອບວັນເທດສະການເພັນເຕຄໍສະເຕ ເຂົາທັງໝົດໄດ້ພ້ອມກັນຢູ່ໃນບ່ອນດຽວ. 2 ໃນທັນໃດນັ້ນເກີດມີສຽງມາຈາກຟ້າເໝືອນສຽງລົມພະຍຸກ້າ ກ້ອງສະນັ່ນທົ່ວເຮືອນ ທີ່ເຂົານັ່ງຢູ່ນັ້ນ. 3 ມີລີ້ນເປັນຮູບເໝືອນແປວໄຟໄດ້ປາກົດໃຫ້ເຂົາເຫັນແລະລີ້ນນັ້ນ ແຕກກະຈາຍອອກໄປຢູ່ເທິງເຂົາທຸກຄົນຜູ້ລະລີ້ນ. 4 ເຂົາເຫລົ່ານັ້ນກໍເຕັມໄປດ້ວຍພະ ວິນຍານບໍລິສຸດ ແລະ ຕັ້ງຕົ້ນປາກພາສາແປກໆຕາມທີ່ພະວິນຍານບໍລິສຸດຊົງໂຜດໃຫ້ ເຂົາເວົ້ານັ້ນ.*

## *ຖ. ຜົນຕ່າງໆ*

*ກິດຈະການ 2:14-18, 33, 38–39; 4:8, 31, 33; 6:3, 5, 8*

***ກິດຈະການ 2:14-18,33, 38–39***
*14 ແລ້ວເປໂຕໄດ້ຢືນຂຶ້ນກັບອັກຄະສາວົກສິບເອັດຄົນ ແລະ ໄດ້ກ່າວຄຳປາໃສດ້ວຍ ສຽງດັງໃຫ້ເຂົາຟັງວ່າ,*
*"ທ່ານຊາວຢິວ ແລະ ບັນດາຄົນທີ່ຢູ່ໃນກຸງເຢລູຊາເລັມເອີຍ, ຈົ່ງ ຊາບເລື່ອງນີ້ ແລະ ຕັ້ງຫູຟັງຖ້ອຍຄຳຂອງຂ້າພະເຈົ້າ."*
*15 "ດ້ວຍວ່າ ຄົນເຫລົ່ານີ້ບໍ່ໄດ້ ເມົາເຫລົ້າເໝືອນດັ່ງພວກທ່ານຄຶດນັ້ນ ເພາະຍັງເປັນເວລາສາມໂມງເຊົ້າຢູ່."*
*16 "ແຕ່ການນີ້ແຫລະ, ແມ່ນຕາມທີ່ຊົງກ່າວດ້ວຍໂຢເອັນຜູ້ປະກາດພະທຳວ່າ,*
*17 'ພະເຈົ້າຊົງກ່າວວ່າ ໃນຄາວສຸດທ້າຍເຮົາຈະຖອກວິນຍານຂອງເຮົາປະທານລົງໃສ່ ມະນຸດທັງປວງ. ລູກຊາຍ ແລະ ລູກຍິງຂອງພວກທ່ານຈະທຳນວາຍ ຊາຍໜຸ່ມຂອງພວກ ທ່ານຈະເຫັນນິມິດແລະຊາຍເຖົ້າຂອງພວກທ່ານຈະຝັນເຫັນ.*
*18 ຝ່າຍເຮົາໃນຄາວນັ້ນ ເຮົາຈະຖອກວິນຍານຂອງເຮົາປະທານລົງໃສ່ຂ້າໃຊ້ຊາຍຍິງ ຂອງເຮົາ ແລະ ເຂົາຈະທຳນວາຍ.*

GCI

*33 "ເມື່ອຊົງຖືກຍົກຂຶ້ນຢູ່ທີ່ພະຫັດກ້ຳຂວາຂອງພະເຈົ້າ ແລະ ໄດ້ຊົງຮັບພະວິນຍານບໍລິສຸດຈາກພະບິດາ ຕາມ*
*ພະສັນຍາ ພະອົງໄດ້ຊົງຖອກພະວິນຍານນັ້ນລົງມາ ດັ່ງພວກທ່ານໄດ້ເຫັນ ແລະໄດ້ຍິນແລ້ວນັ້ນ.*

*38 ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະ ຮັບບັບຕິສະມາໃນ ພະນາມຂອງພະເຢຊູຄຣິດ*
*ທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວ ພວກທ່ານຈະໄດ້ຮັບຂອງພະລາຊະທານ ຄື ພະວິນຍານບໍລິ*
*ສຸດ. 39 "ດ້ວຍວ່າພະສັນຍານັ້ນກໍມີໄວ້ແກ່ທ່ານທັງຫລາຍ, ກັບລູກຫລານຂອງພວກທ່ານ ແລະ ແກ່ຄົນທັງປວງທີ່ຢູ່*
*ຫ່າງໄກ ຄື ແກ່ທຸກຄົນທີ່ອົງພະຜູ້ເປັນເຈົ້າ ພະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພະອົງນັ້ນ."*

***ກິດຈະການ 4:8, 31, 33;***

*8 ຂະນະນັ້ນເປໂຕເຕັມໄປດ້ວຍພະວິນຍານບໍລິສຸດ ຈຶ່ງຕອບວ່າ, "ພວກທ່ານຜູ້ປົກຄອງພົນລະເມືອງ ແລະເຖົ້າແກ່ທັງ*
*ຫລາຍເອີຍ.*

*31 ເມື່ອເຂົາອ້ອນວອນຈົບລົງແລ້ວ ບ່ອນທີ່ເຂົາປະຊຸມກັນນັ້ນກໍສະທ້ານຫວັ່ນໄຫວ ແລະ ຄົນເຫລົ່ານັ້ນໄດ້ເຕັມໄປ*
*ດ້ວຍພະວິນຍານບໍລິສຸດທຸກຄົນ ຈຶ່ງພາກັນກ່າວພະທຳຂອງ ພະເຈົ້າດ້ວຍໃຈກ້າຫານ.*

*33 ຝ່າຍພວກອັກຄະສາວົກກໍເຕັມໄປດ້ວຍລິດເດດອັນໃຫຍ່ ແລະ ເປັນພະຍານວ່າ ພະເຢຊູເຈົ້າໄດ້ຊົງຄືນພະຊົນແລ້ວ*
*ແລະ ພະຄຸນອັນໃຫຍ່ໄດ້ຢູ່ກັບເຂົາທຸກຄົນ.*

***ກິດຈະການ 6:3, 5, 8***

*3 "ເຫດສັນນີ້ ພີ່ນ້ອງທັງຫລາຍເອີຍ, ຈົ່ງຊອກຫາເຈັດຄົນໃນທ່າມກາງພວກທ່ານທີ່ມີຊື່ ສຽງດີ ຜູ້ເຕັມໄປດ້ວຍພະວິນ*
*ຍານບໍລິສຸດ ແລະສະຕິປັນຍາ ເຮົາຈະຕັ້ງເຂົາໃຫ້ດູແລງານນີ້.*
*5 ຄົນທັງໝົດມີຄວາມເຫັນຊອບກັບຄຳສະເໜີນີ້ ຈຶ່ງເລືອກເອົາຊະເຕຟາໂນ ຜູ້ເຕັມໄປ ດ້ວຍຄວາມເຊື່ອ ແລະພະວິນ*
*ຍານບໍລິສຸດ ກັບຟີລິບ, ໂປໂຄໂຣ, ນີການໍ, ຕີ ໂມນ, ປາເມນາ ແລະ ນີໂກລາໂອ ໄທເມືອງອັນຕີໂອເຂຍ ຜູ້ເຂົ້າເປັນ*
*ຝ່າຍສາສະໜາຢິວ.*
*8 ຝ່າຍຊະເຕຟາໂນເຕັມໄປດ້ວຍພະຄຸນ ແລະລິດເດດ ຈຶ່ງເຮັດການອັດສະຈັນ ແລະ ໝາຍສຳຄັນອັນໃຫຍ່ທ່າມກາງ*
*ພົນລະເມືອງ.*

## *ທ. ກິດຈະການງານອື່ນໆຂອງພະວິນຍານບໍລິສຸດ*

ກິດຈະການ 8:518; 9:17; 10:44, 19:16

***ເປໂຕ ແລະ ໂຢຮັນ*** *(ກິດຈະການ 8:5-18)*

*5 ສ່ວນຟີລິບໄດ້ລົງໄປຍັງເມືອງໜຶ່ງທີ່ແຂວງຊາມາເຣຍ ປະກາດເລື່ອງພະຄຣິດໃຫ້ໄທເມືອງນັ້ນຟັງ. 6 ເມື່ອຄົນທັງ*
*ຫລາຍໄດ້ຍິນ ແລະໄດ້ເຫັນໝາຍສຳຄັນທີ່ທ່ານທັງກຳລັງເຮັດຢູ່ນັ້ນ ເຂົາກໍພ້ອມໃຈກັນຟັງຖ້ອຍຄຳປະກາດຂອງທ່ານ.*
*7 ດ້ວຍວ່າ ມີຜີຖ່ອຍຮ້າຍທີ່ສິງຢູ່ໃນຫລາຍຄົນໄດ້ຮ້ອງດ້ວຍສຽງດັງ ແລະອອກມາຈາກຄົນເຫລົ່ານັ້ນ ຄົນທີ່ເປັນງ່ອຍ*
*ແລະ ຂາເສັ່ງຫລາຍຄົນກໍໄດ້ດີເປັນປົກກະຕິ. 8 ຈຶ່ງບັງເກີດມີຄວາມຍິນດີອັນໃຫຍ່ໃນເມືອງນັ້ນ. 9 ມີຊາຍຜູ້ໜຶ່ງ ຊື່*
*ຊີໂມນຢູ່ໃນເມືອງນັ້ນແຕ່ກ່ອນ ມາເປັນໝໍເວດມົນ ເຄີຍເຮັດໃຫ້ໄທເມືອງຊາມາເຣຍງຶດງໍ້ອັດສະຈັນໃຈ ແລະ ອວດອ້າງ*
*ວ່າຕົນເປັນຜູ້ສຳຄັນ, 10 ຝ່າຍຄົນທັງປວງທັງຜູ້ນ້ອຍແລະຜູ້ໃຫຍ່ກໍສົນໃຈຟັງຄົນນັ້ນ ແລ້ວເວົ້າວ່າ, "ຜູ້ນີ້ແຫລະ, ເປັນ*
*ອານຸພາບຂອງພະເຈົ້າຊຶ່ງເອີ້ນວ່າ ມະຫິດທິລິດ." 11 ຄົນທັງຫລາຍໄດ້ສົນໃຈຟັງຜູ້ນັ້ນ ເພາະລາວໄດ້ສະແດງເວດມົນ*
*ໃຫ້ຄົນທັງຫລາຍງຶດງໍ້ອັດສະຈັນຕັ້ງແຕ່ເຫິງມາແລ້ວ. 12 ແຕ່ເມື່ອເຂົາໄດ້ຮັບເຊື່ອຊຶ່ງຟີລິບໄດ້ປະກາດ ເປັນຂ່າວ*
*ປະເສີດເລື່ອງລາຊະອານາຈັກຂອງພະເຈົ້າ ແລະພະນາມແຫ່ງພະເຢຊູຄຣິດແລ້ວ ເຂົາຈຶ່ງໄດ້ຮັບບັບຕິສະມາ ທັງຊາຍ*

GCI

*ແລະຍິງ. 13 ຝ່າຍຊີໂມນເອງກໍເຊື່ອເໝືອນກັນ ເມື່ອຮັບບັບຕິສະມາແລ້ວກໍຕິດຢູ່ກັບຟີລິບ ແລະ ປະຫລາດໃຈທີ່ໄດ້ເຫັນໝາຍສຳຄັນ ແລະ ການອິດທິລິດອັນໃຫຍ່ທີ່ໄດ້ ບັງເກີດມານັ້ນ. 14 ເມື່ອພວກອັກຄະສາວົກທີ່ຢູ່ໃນກຸງເຢລູຊາເລັມໄດ້ຍິນຂ່າວວ່າ ໄທ ຊາມາເຣຍໄດ້ຮັບເອົາພະທຳຂອງພະເຈົ້າແລ້ວ ຈຶ່ງໄດ້ໃຊ້ເປໂຕກັບໂຢຮັນໄປຫາເຂົາ. 15 ທ່ານທັງສອງໄດ້ລົງໄປອ້ອນວອນສຳລັບເຂົາ ເພື່ອໃຫ້ເຂົາໄດ້ຮັບພະວິນຍານບໍລິສຸດ 16 ເພາະພະວິນຍານບໍລິສຸດຍັງບໍ່ທັນໄດ້ລົງມາເທິງເຂົາຈັກຄົນ ມີແຕ່ເຂົາໄດ້ຮັບບັບຕິສະມາໃນພະນາມແຫ່ງພະເຢຊູເຈົ້າເທົ່ານັ້ນ. 17 ເປໂຕກັບໂຢຮັນຈຶ່ງວາງມືໃສ່ເຂົາ ແລ້ວເຂົາກໍໄດ້ຮັບພະວິນຍານບໍລິສຸດ. 18ຝ່າຍຊີໂມນ, ເມື່ອໄດ້ເຫັນວ່າ ພະວິນຍານເປັນທີ່ຊົງປະທານດ້ວຍການວາງມືຂອງພວກອັກຄະສາວົກ ກໍໄດ້ນຳເງິນມາຈະໃຫ້ພວກທ່ານ,*

***ອານາເນຍ*** *ກິດຈະການ 9:17*

*17 ແລ້ວອານາເນຍກໍໄປ ແລະ ເຂົ້າໄປໃນເຮືອນນັ້ນວາງມືໃສ່ໂຊໂລເອົ້າວ່າ, "ອ້າຍໂຊໂລເອີຍ, ອົງພະຜູ້ເປັນເຈົ້າ ຄືພະເຢຊູຊຶ່ງໄດ້ຊົງປາກົດແກ່ເຈົ້າຕາມທາງທີ່ເຈົ້າກຳລັງມານັ້ນ ໄດ້ຊົງໃຊ້ເຮົາມາເພື່ອເຈົ້າຈະໄດ້ເຫັນຮຸ່ງອີກ ແລະ ເພື່ອຈະໄດ້ເຕັມໄປດ້ວຍພະວິນຍານບໍຣິສຸດ".*

***ເປໂຕ*** *ກິດຈະການ 10:44*

*44 ຂະນະເປໂຕຍັງກ່າວດັ່ງນີ້ຢູ່ ພະວິນຍານບໍຣິສຸດໄດ້ສະເດັດລົງມາເທິງຄົນທັງປວງທີ່ກຳລັງຟັງພະທຳນັ້ນ.*

***ໂປໂລ*** *ກິດຈະການ 19:16*

*1 ຂະນະທີ່ອາໂປໂລຍັງຢູ່ເມືອງໂກຣິນໂທ ໂປໂລໄດ້ເດີນທາງຜ່ານເຂດພາກເໜືອແລະມາເຖິງເມືອງເອເຟໂຊ ທີ່ນັ້ນທ່ານໄດ້ພົບລູກສິດລາງຄົນ. 2 ຈຶ່ງຖາມເຂົາວ່າ "ເມື່ອທ່ານທັງຫລາຍເຊື່ອນັ້ນ ພວກທ່ານໄດ້ຮັບພະວິນຍານບໍຣິສຸດຫຼືບໍ່" ເຂົາຕອບວ່າ, "ບໍ່ ທີ່ວ່າມີພະວິນຍານບໍຣິສຸດນັ້ນກໍບໍ່ເຄີຍໄດ້ຍິນ". ໂປໂລຈຶ່ງຖາມເຂົາວ່າ, "ຖ້າຢ່າງນັ້ນ ພວກທ່ານໄດ້ຮັບບັບຕິສະມາແນວໃດ" ເຂົາຕອບວ່າ ຮັບບັບຕິສະມາຂອງໂຢຮັນ". 4 ແລ້ວໂປໂລບອກວ່າ, "ໂຢຮັນໃຫ້ຮັບບັບຕິສະມາກ່ຽວເລື່ອງການຖິ້ມໃຈເກົ່າເອົາໃຈໃໝ່ ໂດຍບອກແກ່ພົນລະເມືອງໃຫ້ເຊື່ອຜູ້ທີ່ຈະມາພາຍຫລັງຕົນ ຄື ເຊື່ອໃນພະເຢຊູ." 5 ເມື່ອໄດ້ຍິນດັ່ງນັ້ນເຂົາຈຶ່ງຮັບບັບຕິສະມາໃນພະນາມຂອງພະເຢຊູເຈົ້າ. 6 ເມື່ອໂປໂລໄດ້ວາງມືໃສ່ເຂົາແລ້ວ ພະວິນຍານບໍຣິສຸດກໍສະເດັດມາເທິງເຂົາ. ເຂົາຈຶ່ງຕັ້ງຕົ້ນປາກພາສາແປກໆ ແລະ ໄດ້ທຳນວາຍ.*

## *ນ. ການຮັບເອົາພະວິນຍານບໍລິສຸດ*

ລູກາ 11:11-13

*ລູກາ 11:11-13*
*11 ຜູ້ໃດໃນພວກທ່ານທີ່ເປັນພໍ່ ຖ້າລູກຂໍປາຈະບໍ່ເອົາງູຕ່າງປາໃຫ້ແກ່ລູກຕີ້. 12 ຖ້າຂໍໄຂ່ຈະບໍ່ເອົາແມງງອດໃຫ້ຕີ້. 13 ເຫດສັນນັ້ນທ່ານທັງຫລາຍເອງຜູ້ເປັນຄົນຊົ່ວຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ ຫລາຍກວ່ານັ້ນອີກຈັກເທົ່າໃດ ພະບິດາຜູ້ຊົງສະຖິດໃນສະຫວັນຈະຊົງປະທານພະວິນຍານບໍຣິສຸດແກ່ຜູ້ທີ່ຂໍຈາກພະອົງ.*

**ຄວາມໃກ້ຊິດ / ການສາມັກຄີທຳ → ທ່ານຕ້ອງການເຂົ້າໃກ້ຫລາຍເທົ່າໃດ?**